ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 1370/ກງ
ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2020

**ຂໍ້ຕົກລົງ**
**ວ່າດ້ວຍ ການຮັບຮອງເອົາຜະລິດຕະພັນ U-Money ຂອງບໍລິສັດ ສະຕາຟິນເທັກ ຈຳກັດ ນຳໃຊ້ເຂົ້າໃນການເບີກຈ່າຍ ເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ພະນັກງານ-ລັດຖະກອນ ຢູ່ບັນດາເມືອງທີ່ຍັງບໍ່ທັນມີການບໍລິການຂອງທະນາຄານ**

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບ ເລກທີ 144/ນຍ ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດ ການເບີກຈ່າຍເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ພະນັກງານ-ລັດຖະກອນ ຜ່ານລະບົບທະນາຄານ ສະບັບເລກທີ 3143/ກງ, ລົງວັນທີ 4 ຕຸລາ 2018;
- ອີງຕາມ ບົດລາຍງານຂອງຄັງເງິນແຫ່ງຊາດ ສະບັບເລກທີ 2486/ຄງຊ, ລົງວັນທີ 28 ພຶດສະພາ 2020.

**ລັດຖະມົນຕີ ກະຊວງການເງິນ ຕົກລົງ :**

ມາດຕາ 1: ເຫັນດີຮັບຮອງເອົາ ຜະລິດຕະພັນ U-Money ຂອງບໍລິສັດ ສະຕາຟິນເທັກ ຈຳກັດ ນຳໃຊ້ເຂົ້າໃນການເບີກຈ່າຍ ເງິນເດືອນ, ເງິນອຸດໜູນ ແລະ ເງິນນະໂຍບາຍ ໃຫ້ພະນັກງານ-ລັດຖະກອນ ຢູ່ບັນດາເມືອງທີ່ຍັງບໍ່ທັນມີການບໍລິການ ຂອງທະນາຄານ;

ມາດຕາ 2 : ມອບໃຫ້ ຄັງເງິນແຫ່ງຊາດ, ພະແນກການເງິນແຂວງ, ຄັງເງິນແຫ່ງຊາດປະຈຳແຂວງ, ຫ້ອງການເງິນເມືອງ, ຄັງເງິນແຫ່ງຊາດປະຈຳເມືອງ, ບໍລິສັດ ສະຕາຟິນເທັກ ຈຳກັດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນເປັນເຈົ້າການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

ມາດຕາ 3 : ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງການເງິນ
ລັດຖະມົນຕີ

ສົມດີ ດວງດີ

Scanned with CamScanner